# ຄວາມຍືນຍົງຂອງໜີ້ສິນສາທາລະນະ ແລະ ການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ

**ຜູ້ຂຽນ: ເກືອງຄໍາ ສີແສງນາມ, ອໍາພອນ ໄຊສົມບັດ[1], ວົງພາກອນ ວົງສຸພັນ, ທິບນະຄອນ ຊະນະນິຄົມ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1] ***ຜູ້ຮັບຜິດຊອບ:*** *ອໍາພອນ ໄຊສົມບັດ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການສຶກຄວາມຍືນຍົງຂອງໜີ້ສິນສາທາລະນະ ແລະ ການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວມີສາມຈຸດປະສົງຫຼັກຄືສຶກສາສະພາບລວມໜີ້ສິນສາທາລະນະ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດຂອງ ສປປ ລາວ ປີ 2015 ຫາ 2023, ສຶກສາຜົນກະທົບຂອງໜີ້ສິນສາທາລະນະຕໍ່ການຂະຫຍາຍຕົວທາງເສດຖະກິດໃນ ສປປ ລາວ ແລະ ສຶກສາຄວາມຍືນຍົງຂອງໜີ້ສິນສາທາລະນະປະເທດຂອງ ສປປ ລາວ, ຕົວປ່ຽນທີ່ໃຊ້ໃນການສຶກສາມີອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ, ລາຍຮັບພາກລັດຖະບານ, ໜີ້ສາທາ ລະນະ, ການສົ່ງອອກ, ປະຊາກອນ, ລາຍໄດ້ຕໍ່ຫົວຄົນ, ລາຍຈ່າຍພາກລັດຖະບານເປັນຂໍ້ມູນລາຍປີ 1990 ຫາ 2023 ແລະ ວິເຄາະ Autoregressive Distributed Lag (ARDL) ແລະ Fully Modified regression (FMOLS). ການສຶກສາຜົນກະທົບຂອງໜີ້ສິນສາທາລະນະຕໍ່ການຂະຫຍາຍຕົວທາງເສດຖະກິດກໍລະນີວິເຄາະມີຕົວປ່ຽນຄວບຄຸມພົບວ່າລາຍໄດ້ຕໍ່ຫົວຄົນມີຄວາມສໍາພັນໃນທິດທາງດຽວກັນກັບອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນທີ່ລະດັບຄວາມສໍາຄັນທາງສະຖິຕິທັ້ງໄລຍະສັ້ນ ແລະ ໄລຍະຍາວ. ສ່ວນກໍລະນີການວິເຄາະທີ່ບໍ່ມີຕົວປ່ຽນຄວບຄຸມກັບພົບວ່າໃນໄລຍະສັ້ນມີພຽງໜີ້ສິນສາທາລະນະທີ່ມີຄວາມສໍາພັນກັບອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນປະເທດທີ່ລະດັບຄວາມສໍາຄັນທາງສະຖິຕິ. ສ່ວນການວິເຄາະຄວາມຍືນຍົງຂອງໜີ້ໃນແງ່ຂອງຄວາມເຂັ້ມແຂງຂອງຄວາມຍືນຍົງຂອງໜີ້ສິນສາທາລະນະບົ່ງຊີ້ວ່າໃນຊ່ວງທີ່ກໍາລັງສຶກສາໜີ້ສາທາລະນະຂອງ ສປປ ລາວ ມີຄວາມຍືນຍົງໃນລະດັບຕໍ່າ.

**ຄໍາສໍາຄັນ:** ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ, ໜີ້ສາທາລະນະ, ຄວາມຍືນຍົງຂອງໜີ້ສາທາລະນະ, ລາຍຮັບພາກລັດຖະບານ ແລະ ລາຍຈ່າຍພາກລັດຖະບານ.

# Public debt sustainability and economic growth: Evidence from Lao PDR

The study of public debt sustainability and economic growth of Lao PDR has three main objectives: to study the general situation of public debt and economic growth of Lao PDR from 2015 to 2023, to study the impact of public debt on economic growth in Lao PDR, and to study the sustainability of public debt of Lao PDR. The variables used in the study are GDP growth rate, government revenue, public debt, export, population, per capita income, and government expenditure, annual data from 1990 to 2023 and analyzed by Autoregressive Distributed Lag (ARDL) and Fully Modified Regression (FMOLS) models. The results of the study on the impact of public debt on economic growth are related in the same direction as the growth rate of GDP at a statistically significant level in both the short and long term. In the case of analysis without control variables, it was found that in the short term, only public debt has a relationship with the growth rate of GDP at a statistically significant level. In addition, the analysis of debt sustainability in terms of the strength of public debt sustainability indicates that during the study period, the public debt of the Lao PDR has a low level of sustainability.

**Keywords:** Gross Domestic Product Growth Rate, Public Debt, Debt Sustainability, Government Revenue and Government Expenditure.